## ພະແນກປະສູດ

ພະແນກປະສູດ ເປັນພະແນກໜຶ່ງທີ່ຂຶ້ນກັບໂຮງໝໍແມ່ ແລະ ເດັກເກີດໃໝ່ ທີ່ເປັນບຸລິມະສິດຂອງໂຮງໝໍ ຊຶ່ງເລີ່ມຕົ້ນໃຫ້ການບໍລິການເກີດລູກ ແລະ ພະຍາດຍິງ ເດືອນ ກຸມພາ 1994 ໂດຍການຊີ້ນໍາຂອງ ທ່ານ ຮສ. ດຣ ບົວວັນ ແສນສະຖິດ ເປັນຜູ້ກໍ່ຕັ້ງ ແລະ ໄດ້ແຕ່ງຕັ້ງໃຫ້ ທ່ານ ດຣ. ຕຸ້ຍ ຈັນທະລັງສີ ເປັນຜູ້ບໍລິຫານ ແລະ ໄລຍະນັ້ນ ເລີ່ມມີຄົນເຈັບມາບໍລິການເກີດລູກສະເລ່ຍ 1-2 ຄົນ/ມື້; ພ້ອມດຽວກັນນັ້ນ ທາງດ້ານວິຊາ ແລະ ບຸກຄະລາກອນ ກໍ່ໄດ້ມີການເຕີບໃຫ່ຍຂະຫຍາຍຕົວ ແລະ ໄດ້ສ້າງຄວາມເຂັ້ມແຂງຂຶ້ນເທື່ອລະກ້າວ. ປີ 2016 ພະແນກປະສູດໄດ້ແບ່ງອອກເປັນ 3 ພະແນກ (ປະສູດ, ພະຍາດຍິງ, ປິ່ນປົວມີລູກຍາກ) ເພື່ອຕອບສະໜອງວຽກງານ **5 ດີ 1 ພໍໃຈ** ແລະ ຕາມຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການ ແລະ ການບໍລິການຄົນເຈັບໃຫ້ມີຄຸນນະພາບສູງຂຶ້ນ. ປັດຈຸບັນ ພະແນກປະສູດ ປະກອບມີ 5 ໜ່ວຍງານ ແລະ ມີພາລະບົດບາດ ໃຫ້ການບໍລິ ການກວດ, ກັ່ນຕອງ, ຕິດຕາມ, ປິ່ນປົວແມ່ຍິງຖືພາທີ່ມາຝາກທ້ອງປົກກະຕິ ແລະ ແມ່ຍິງຖືພາທີ່ມີປັດໄຈສ່ຽງສູງ ພ້ອມທັງໃຫ້ສຸຂະສຶກສາ ແລະ ຂໍ້ມູນຂ່າວສານຕ່າງໆກ່ຽວກັບສຸຂະພາບຂອງແມ່ ແລະ ເດັກໃນທ້ອງ,ໃຫ້ບໍລິການຄົນເຈັບປະສູດທີ່ມາບໍລິການຢູ່ຫ້ອງປະສູດ, ຕິດຕາມກ່ອນເກີດ ແລະ ຫຼັງເກີດລູກປົກກະຕິ ຫຼື ເກີດລູກຍາກທີ່ມີອາການສົມ; ນອກຈາກນີ້ ໄດ້ມີ ໂຮງຮຽນພໍ່ແມ່ ແລະ ວຽກງານນົມແມ່. ປີ 2000 ໄດ້ຮ່ວມມືກັບໂຄງການດ້ານການຮ່ວມມືໂຮງໝໍລາວ-ສະວິດ (Swiss Lao Hospital Project) ທີ່ໄດ້ຊ່ວຍເຫຼືອອຸປະກອນການແພດ ໂດຍສະເພາະ ເຄື່ອງເອໂກ້ ແລະ ອື່ນໆ..., ຝຶກອົບຮົມໃຫ້ພະນັກງານ ປະຈຸບັນມີຊ່ຽວຊານສະເພາະທາງທີ່ໂດດເດັ່ນ ແລະ ກາຍເປັນສູນຝຶກອົບຮົມໃຫ້ນັກສຶກສາລວມມີແພດຊ່ຽວຊານຂັ້ນ I, ນັກສຶກການແພດ ປີ 4 ແລະ ປີ 6, ຜະດຸງຄັນ ແລະ ພະນັກງານຕ່າງແຂວງ. ຈາກການເຕີບໃຫ່ຍຂະຫຍາຍຕົວຂອງພະແນກ ປັດຈຸບັນ ມີຄົນເຈັບມາບໍລິການສະເລ່ຍ 100 ຄົນ/ມື້ ແລະ ກວດແມ່ສ່ຽງໄພສະເລ່ຍ 3-5 ຄົນ/ມື້, ມາຝາກທ້ອງແຕ່ລະມື້ ສະເລ່ຍ 4000-5000 ຄົນ/ປີ ແລະ ເກີດລູກມາໃຫ້ບໍລິການເກີດສະເລ່ຍ 15-20 ຄົນ/ມື້ ໂດຍລວມສະເລ່ຍ 600-700 ຄົນ/ປີ; ພ້ອມດຽວກັນນັ້ນ ບໍ່ວ່າຈະເປັນ ທ່ານໝໍ ແລະ ຜະດຸງຄັນ ໃນພະແນກຈໍານວນໜຶ່ງກໍ່ໄດ້ກາຍເປັນຄູຝຶກ ແລະ ໄດ້ລົງໄປຝຶກອົບຮົມໃຫ້ພະນັກງານຢູ່ແຕ່ລະແຂວງເປັນປະຈໍາ.

ໂຄງປະກອບການຈັດຕັ້ງຂອງພະແນກມີ 5 ກຸ່ມ: 1. ກຸ່ມວຽກ ກວດດູແລກວດກັ່ນຕອງແມ່ຍິງຖືພາ; 2. ກຸ່ມວຽກ ປະສູດ; 3. ກຸ່ມວຽກ ຕິດຕາມຫຼັງຄອດ; 4. ກຸ່ມວຽກ ສົ່ງເສີມສຸຂະພາບ ແລະ ລ້ຽງລູກດ້ວຍນົມແມ່; 5. ກຸ່ມວຽກ ພະຍາບານ. ພະແນກປະສູດມີພະນັກງານ 44 ຄົນ, ຊາຍ 5 ຄົນ, ໃນນີ້: ຊ່ຽວຊານຂັ້ນ I ມີ 4 ຄົນ (ປັດຈຸບັນຊ່ຽວຊານຂັ້ນ I ກໍາລັງສືບຕໍ່ຮຽນ 5 ຄົນ); ປະລິນຍາຕີການແພດທົ່ວໄປ 2 ຄົນ; ຜະດຸງຄັນປະລິນຍາຕີ 5 ຄົນ; ຜະດຸງຄັນຊັ້ນສູງ 5 ຄົນ; ຜະດຸງຄັນຊັ້ນກາງ 1 ຄົນ; ພະຍາບານຊັ້ນສູງ 4 ຄົນ; ພະຍາບານຊັ້ນກາງ 6 ຄົນ; ພະຍາບານເຕັກນິກຊັ້ນກາງ 4 ຄົນ; ປະລິນຍາຕີບໍລິຫານ 2 ຄົນ ແລະ ປະລິນຍາຕີບໍລິຫານທຸລະກິດ 1 ຄົນ.

- **ຜົນງານໃນໄລຍະຜ່ານມາຂອງພະແນກປະສູດ**
  - ມີການຕິດຕາມ ຊຸກຍູ້ກໍ່ສ້າງພະນັກງງານ ເພື່ອປະເມີນຜົນງານ ແລະ ສະເໜີຂັ້ນເທິງຂອງຕົນຮັບເຂົ້າໃນອົງການຈັດ ຕັ້ງຕ່າງໆ ແລະ ອົງການຈັດຕັ້ງຂອງພັກ.
  - ໄດ້ສໍາເລັດການຝຶກອົບຮົມກ່ຽວກັບການໃຫ້ຢາຕ້ານເຊື້ອ HIV ໃຫ້ພະນັກງານວິຊາການ 2 ຊຸດ ເພື່ອກຽມເປີດສູນ POC ຢູ່ທີ່ໂຮງໝໍເສດຖາ ແລະ ໂຮງໝໍມະໂຫສົດ.
  - ໄດ້ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ຕ່າງແຂວງ ໂດຍການລົງໄປເປັນຄູຝຶກວຽກງານແມ່ ແລະ ເດັກ ໃນວຽກງານຍຸດທະສາດຊ່ວຍກະຊວງ ເຊັ່ນ: ຊ່ວຍກົມປິ່ນປົວ, ກົມອານາໄມ ແລະ ສູນແມ່ ແລະ ເດັກ ໃນວຽກງານນົມແມ່, ວຽກງານກວດກັ່ນຕອງແມ່ສ່ຽງໄພໃນແມ່ຍິງຖືພາ ແລະ ວຽກງານເຊື່ອມສານສຸຂະພາບແມ່ ແລະ ເດັກ.

- ໄດ້ໄປຍົກລະດັບຄວາມຮູ້, ຖອດຖອນບົດຮຽນຢູ່ຕ່າງປະເທດ ເຊັ່ນ: ປະເທດຫວຽດນາມ Skin to Skin , MFM ແລະ ເຂົ້າຮ່ວມກອງປະຊຸມວິຊາການປະຈຳປີຢູ່ປະເທດໄທ.
- ລົງຕິດຕາມຊຸກຍູ້ສ້າງຄວາມເຂັ້ມແຂງໃຫ້ຕ່າງແຂວງເລື່ອງວຽກງານເຊື່ອມສານສຸຂະພາບຈະເລີນພັນ.
- ໄດ້ສິດສອນພະນັກງານຕ່າງແຂວງ ທີ່ເຂົ້າມາຝຶກອົບຮົມຢູ່ພະແນກປະສູດ 2 ຊຸດ ຊຶ່ງມາຈາກແຂວງຄຳມ່ວນ ແລະ ແຂວງວຽງຈັນ. .
- ມີການຈັດຕາຕະລາງການໝູນວຽນແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະບຸກຄົນມີຄວາມຮັບຜິດຊອບ ແລະ ປະຕິບັດການເວນຍາມ, ການມອບ-ຮັບຍາມ ລວມທັງທ່ານໝໍ ແລະ ພະຍາບານ.
- ມີການປະຕິບັດການຮຽນ ການສອນ ໃຫ້ແກ່ນັກສຶກສາການແພດ ປີທີ 3, ປີ 4 ແລະ ປີທີ 6, ຜະດຸງຄັນ ,ນັກສຶກສາແພດຊ່ຽວຊານປະສູດ-ພະຍາດຍິງ ແລະ ພະນັກງານຕ່າງແຂວງທີ່ເຂົ້າມາຝຶກອົບຮົມ ໂດຍແບ່ງໃຫ້ແຕ່ລະຄົນມີຄວາມຮັບຜິດຊອບ.
- ໄດ້ມີການກໍ່ສ້າງພະນັກງານໃຫ້ມີຄວາມເຂັ້ມແຂງທາງດ້ານວິຊາການ ແລະ ມີການຝຶກອົບຮົມໃຫ້ພະນັກງານພາຍໃນພະແນກ, ພ້ອມທັງໄດ້ສົ່ງໄປຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຖອດຖອນບົດຮຽນ ເພື່ອເສີມສ້າງຄວາມເຂັ້ມແຂງໃນການປະຕິບັດໜ້າທີ່ວຽກງານໃຫ້ໄດ້ຮັບຜົນດີ ມີຄຸນນະພາບສູງ ຕໍ່ການບໍລິການດ້ານສຸຂະພາບ.